EDL-GEN ໄດ້ຮັບລາງວັນ “ນັກທຸລະກິດຊັ້ນນຳດີເດ່ັນ ປີ 2024”





ວັນທີ 14 ພະຈິກ 2025 ທີ່ຫໍປະຊຸມແຫ່ງຊາດ ໄດ້ຈັດພິທີມອບລາງວັນ “ນັກທຸລະກິດຊັ້ນນຳດີເດ່ັນ ປີ 2024” ເນື່ອງໃນໂອກາດຄົບຮອບ 35 ປີ ການກໍ່ຕັ້ງຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ). ພິທີດັ່ງກ່າວໄດ້ຮັບການໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ທ່ານ ມະໄລທອງ ກົມມະສິດ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມດ້ວຍຄະນະຜູ້ແທນຈາກຫຼາຍພາກສ່ວນ.

ໃນພິທີ ທ່ານ ສຸກສະຫວາດ ໂສສຸພັນ, ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ກໍ່ໄດ້ຂຶ້ນຮັບລາງວັນດັ່ງກ່າວ.

ການໄດ້ຮັບລາງວັນ “ນັກທຸລະກິດຊັ້ນນຳດີເດ່ັນ” ເປັນການຮັບຮອງຢ່າງເປັນທາງການຕໍ່ບົດບາດຂອງ EDL-Gen ໃນການພັດທະນາອຸດສາຫະກຳພະລັງງານຂອງປະເທດ. ຄວາມໝາຍທີ່ໂດດເດ່ັນແມ່ນ:

ການຮັບຮອງທາງດ້ານການບໍລິຫານ ແລະ ຄວາມໂປ່ງໃສ

- ເປັນການຢືນຢັນວ່າບໍລິສັດໄດ້ດຳເນີນທຸລະກິດດ້ວຍມາດຕະຖານສາກົນ, ມີການບໍລິຫານທີ່ມີປະສິດທິຜົນ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມ.
- ສະທ້ອນບົດບາດຂອງ EDL-Gen ໃນການຮັບປະກັນຄວາມໝັ້ນຄົງພະລັງງານຂອງຊາດ
  ບໍລິສັດເປັນແກນຫຼັກໃນການຜະລິດໄຟຟ້າພາຍໃນປະເທດ ແລະ ການສົ່ງອອກໄຟຟ້າໄປຫາປະເທດເພື່ອນບ້ານ, ຊຶ່ງຊ່ວຍເສີມລາຍຮັບ ແລະ ເສີມຂະຍາຍເສດຖະກິດຂອງຊາດ.
- ການລົງທຶນຢ່າງຕໍ່ເນື່ອງໃນພະລັງງານສະອາດ ການຮັບລາງວັນນີ້ເປັນການມອບກຳລັງໃຈໃຫ້ EDL-Gen ໃນການຜັກດັນການພັດທະນາພະລັງງານນ້ຳ,ພະລັງງານທົດແທນ ແລະ ໂຄງການທີ່ຮັບຜິດຊອບຕໍ່ສິ່ງແວດລ້ອມ.
- ການສ້າງຄວາມເຊື່ອມັ່ນໃຫ້ນັກລົງທຶນ ແລະ ຄູ່ຮ່ວມງານເປັນສັນຍານວ່າ EDL-Gen ແມ່ນອົງການທີ່ມີສະຖຽນລະພາບ ແລະ ໜ້າເຊື່ອຖື ມີຄວາມພ້ອມໃນການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ. ການມອບລາງວັນຄັ້ງນີ້ມີຫົວໜ່ວຍທຸລະກິດທີ່ໄດ້ຮັບການຄັດເລືອກຈຳນວນ 89 ຫົວໜ່ວຍ ຄວບຄຸມ 12 ຂະແໜງການ ທັງທຸລະກິດລາວ ແລະ ທຸລະກິດທີ່ມີເຈົ້າຂອງເປັນຕ່າງປະເທດ. ນີ້ເປັນການສະທ້ອນເຫັນຄວາມເຂັ້ມແຂງ ແລະ ຄວາມພະຍາຍາມຮ່ວມກັນຂອງພາກທຸລະກິດໃນການພັດທະນາເສດຖະກິດຊາດ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ